Allianz

1 ກຸມພາ 2023

# ເອກະສານຊ້ອນທ້າຍ ສັນຍາປະກັນໄພລົດ
# ຂອງບໍລິສັດ ອາລີອັນສ໌ ປະກັນໄພລາວ ຈຳກັດ
# (ຜູ້ປະກັນໄພ)

## ເງື່ອນໄຂ

### 1. ເງື່ອນໄຂຮຽກຮ້ອງສິນທົດແທນປະກັນໄພ

(1) ໃນກໍລະນີພາຫະນະຂອງທ່ານເກີດອຸປະຕິເຫດ ຫຼື ມີການສູນເສຍ ທ່ານຕ້ອງໂທຫາພວກເຮົາຕາມເບີໂທລະສັບສາຍດ່ວນຂອງພວກເຮົາໂດຍທັນທີ ຕາມທີ່ໄດ້ລະບຸໄວ້ໃນສັນຍາປະກັນໄພ ແລະ ເມື່ອທ່ານໄດ້ຮັບຈົດໝາຍ, ໜັງສືຮຽກຫາ ຫຼື ໝາຍຮຽກ ທ່ານຕ້ອງສົ່ງເອກະສານເຫຼົ່ານີ້ໃຫ້ພວກເຮົາໂດຍທັນທີ.

ທ່ານຕ້ອງແຈ້ງໃຫ້ພວກເຮົາຊາບໂດຍທັນທີ ກ່ຽວກັບການດຳເນີນຄະດີອຸປະຕິເຫດ ຫຼື ການສູນເສຍທີ່ເກີດຂຶ້ນກັບພາຫະນະຂອງທ່ານ. ທ່ານຕ້ອງແຈ້ງເຈົ້າໜ້າທີ່ຕຳຫຼວດທີ່ກ່ຽວຂ້ອງໂດຍທັນທີ ເມື່ອພາຫະນະຂອງທ່ານຖືກລັກ ຫຼື ມີການກະທຳຜິດທາງອາຍາ ແລະ ໃຫ້ການຮ່ວມມືກັບພວກເຮົາເພື່ອນຳເອົາຕົວຜູ້ກະທຳຜິດມາລົງໂທດ.

(2) ໃນກໍລະນີທີ່ເກີດອຸປະຕິເຫດ, ທ່ານຕ້ອງບໍ່ແກະ ຫຼື ມ້າງສິ້ນສ່ວນໃດໜຶ່ງຂອງພາຫະນະ ຫຼື ເລີ່ມການສ້ອມແປງ ໂດຍບໍ່ໄດ້ຮັບການເຫັນດີ ຫຼື ການອະນຸມັດຈາກພວກເຮົາລ່ວງໜ້າຢ່າງເປັນລາຍລັກອັກສອນສາກ່ອນ.

(3) (ກ) ທ່ານຕ້ອງບໍ່ສະເໜີ, ສັນຍາ, ຊຳລະເງິນ ຫຼື ຮັບເອົາຄວາມຮັບຜິດຊອບ ຕໍ່ຄວາມເສຍຫາຍ ໂດຍບໍ່ໄດ້ຮັບການເຫັນດີ ຫຼື ການອະນຸມັດລ່ວງໜ້າ ຢ່າງເປັນລາຍລັກອັກສອນຈາກພວກເຮົາສາກ່ອນ. ພວກເຮົາສາມາດເຂົ້າຄວບຄຸມ ແລະ ດຳເນີນການໃນນາມຂອງທ່ານ ເພື່ອແກ້ໄຂບັນຫາ ຫຼື ດຳເນີນການສະສາງ ກ່ຽວກັບການຮຽກຮ້ອງສິນທົດແທນປະກັນໄພ. ພວກເຮົາມີສິດຢ່າງເຕັມສ່ວນໃນການດຳເນີນການ ແລະ ການສະສາງດັ່ງກ່າວ ແລະ ທ່ານຕ້ອງໃຫ້ການຮ່ວມມືໃນການເປີດເຜີຍຂໍ້ມູນທັງໝົດ ແລະ ໃຫ້ການຊ່ວຍເຫຼືອທີ່ພວກເຮົາຕ້ອງການ.

(ຂ) ພວກເຮົາອາດຊຳລະຄວາມຮັບຜິດຊອບເຕັມຈຳນວນ ພາຍໃຕ້ສັນຍາປະກັນໄພບຸກຄົນທີສາມ ໃຫ້ກັບທ່ານໄດ້ທຸກເວລາ ພາຍຫຼັງການເກີດອຸປະຕິເຫດ ແລ້ວປົດປ່ອຍຕົວເອງອອກຈາກ



ບໍລິສັດ ອາລີອັນສ໌ ປະກັນໄພລາວ ຈຳກັດ
ເລກທີ 33, ຖະໜົນ ລ້ານຊ້າງ, ອາຄານ ອາລີອັນສ໌
ຕູ້ ປ. ນ. 4223 ນະຄອນຫຼວງວຽງຈັນ, ສປປລາວ
ໂທລະສັບ 1457; + 856 21 215903;
ແຈ້ງອຸປະຕິເຫດ 24 ຊົ່ວໂມງ ໂທ: 1456, 021 222 222, 020 5524 4222

Allianz Insurance Laos Co.,Ltd
33, Lanexang Avenue, Allianz Building
P. O. Box: 4223, Vientiane Capital, Lao PDR
Phone: 1457; +856 21 215903;
24 hrs./7 Accident Helpline: 1456, 021 222 222, 020 5524 4222

www.azlaos.com
www.facebook.com/allianzinsurancelaos
E-mail: agl@agl-allianz.com

ການຮ້ອງຟ້ອງ, ການຊຳລະສະສາງ ຫຼື ການດຳເນີນຄະດີ ທີ່ເກີດຂຶ້ນກັບທ່ານ. ນອກນີ້, ພວກເຮົາຍັງຈະບໍ່ຮັບຜິດຊອບຕໍ່ຄວາມເສຍຫາຍ ອັນມີຜົນມາຈາກການກະທຳ ຫຼື ການລະເວັ້ນກ່ຽວກັບການຮ້ອງຟ້ອງ, ການຊຳລະສະສາງ ຫຼື ການດຳເນີນຄະດີທີ່ເກີດຂຶ້ນກັບທ່ານ ພາຍໃຕ້ຄວາມຮັບຜິດຊອບຂອງພວກເຮົາ ຫຼື ປົດປ່ອຍຕົວເອງອອກຈາກຄ່າໃຊ້ຈ່າຍ ທີ່ເກີດຂຶ້ນກັບທ່ານ ຫຼື ຜູ້ຮຽກຮ້ອງສິນທົດແທນປະກັນໄພອື່ນ.

(ຄ) ຄວາມຮັບຜິດຊອບສູງສຸດຂອງພວກເຮົາ ຕໍ່ກັບຜູ້ໂດຍສານທີ່ໂດຍສານມານຳຍານພາຫະນະ ຂອງບຸກຄົນທີສາມ ຈະຈຳກັດຕາມບ່ອນນັ່ງທີ່ໄດ້ຮັບອະນຸຍາດ ຫຼື ໄດ້ຮັບການຂຶ້ນທະບຽນ ຂອງພາຫະນະຂອງບຸກຄົນທີສາມເທົ່ານັ້ນ.

(ງ) ທ່ານຕ້ອງໃຫ້ການຮ່ວມມື ແລະ ຊ່ວຍເຫຼືອພວກເຮົາ ຫຼື ຜູ້ຕາງໜ້າທີ່ໄດ້ຮັບການແຕ່ງຕັ້ງຂອງພວກເຮົາ ໃນການລົງເກັບກຳຂໍ້ມູນ ເພື່ອປະກອບການພິຈາລະນາ ຈ່າຍສິນທົດແທນປະກັນໄພ.

(ຈ) ທ່ານຕ້ອງປະຕິບັດບັນດາຂໍ້ກຳນົດ ແລະ ເງື່ອນໄຂ ທີ່ກ່ຽວຂ້ອງກັບການຮຽກຮ້ອງສິນທົດແທນປະກັນໄພຂອງທ່ານ, ການສ້ອມແປງ ແລະ ການກວດກາ ຕ້ອງໃຫ້ສຳເລັດພາຍໃນເກົ້າສິບ (90) ວັນ ນັບຈາກວັນທີການເກີດອຸປະຕິເຫດ ຫຼື ວັນທີມີການສູນເສຍ. ການຂະຫຍາຍເວລາດັ່ງກ່າວອອກ ທ່ານຕ້ອງໄດ້ຂຽນໃບສະເໜີຫາພວກເຮົາ ແລະ ໄດ້ຮັບການເຫັນດີລ່ວງໜ້າຈາກພວກເຮົາຢ່າງເປັນລາຍລັກອັກສອນສາກ່ອນ.

(4) ພວກເຮົາອາດສ້ອມແປງໃຫ້ຄືນສະພາບເດີມ ຫຼື ຟື້ນຟູ ຫຼື ປ່ຽນພາຫະນະໃຫ້ ຫຼື ປ່ຽນອາໄຫຼ່ ຫຼື ອຸປະກອນເສີມ ຫຼື ທົດແທນເປັນເງິນສົດ ໃນກໍລະນີເກີດອຸປະຕິເຫດ ຫຼື ການສູນເສຍ ຕາມທີ່ກຳນົດໄວ້ໃນສັນຍາປະກັນໄພ, ຄວາມຮັບຜິດຊອບຂອງພວກເຮົາ ຕໍ່ກັບອຸປະຕິເຫດ ຫຼື ການສູນເສຍດັ່ງກ່າວ ຈະຈຳກັດ ຫຼື ບໍ່ເກີນວົງເງິນຄຸ້ມກັນທີ່ລະບຸໃວ້ໃນສັນຍາປະກັນໄພ ໂດຍອີງຕາມມູນຄ່າປະຈຸບັນ ຫຼື ມູນຄ່າຕະຫຼາດ ຂອງພາຫະນະທີ່ເກີດເຫດ ລວມທັງອາໄຫຼ່, ອຸປະກອນເສີມທີ່ເສຍຫາຍ ຫຼື ສູນເສຍ ລວມເຖິງຄ່າແຮງງານໃນການຕິດຕັ້ງທີ່ສົມເຫດສົມຜົນ ໃນເວລາເກີດອຸປະຕິເຫດ ຫຼື ສູນເສຍ ແລ້ວແຕ່ຈຳນວນໃດຈະຕ່ຳວ່າ. ໃນກໍລະນີບໍ່ມີອາໄຫຼ່ ຫຼື ອຸປະກອນເສີມ ຈັດຫາໄດ້ໃນປະເທດລາວ ຕາມທີ່ລະບຸໄວ້ຂ້າງເທິງພວກເຮົາຈະຊຳລະ:

(a) I. ລາຄາທີ່ລະບຸໃນແຄັດຕາລັອກ ຫຼື ລາຍການລາຄາຫຼ້າສຸດ ທີ່ອອກໂດຍຜູ້ຜະລິດ ຫຼື ຕົວແທນໃນພາກພື້ນ ອີງຕາມອັດຕາເປີເຊັນລາຄາທີ່ທ່ານຈະຕ້ອງຮັບຜິດຊອບ ຕາມທີ່ລະບຸໄວ້ໃນເອກະສານຊ້ອນທ້າຍ ທີ່ກຳນົດໃວ້ໃນສັນຍາປະກັນໄພ.

II. ຖ້າບໍ່ມີແຄັດຕາລັອກ ຫຼື ລາຍການລາຄາ, ລາຍການລາຄາທີ່ໄດ້ຮັບຈາກໂຮງງານຜະລິດ ລວມເຖິງຄ່າຂົນສົ່ງທີ່ສົມເຫດສົມຜົນ (ນອກເໜືອຈາກການຂົນສົ່ງທາງອາກາດ) ແລະ ພາສີນຳເຂົ້າ.

(b) ຄ່າແຮງງານທີ່ສົມເຫດສົມຜົນ ໃນການປະກອບແລະຕິດຕັ້ງ ອາໄຫຼ່ ຫຼື ອຸປະກອນເສີມເຂົ້າກັບພາຫະນະ.

(5) ພວກເຮົາຈະຊຳລະພຽງ 50% ຂອງການປ່ຽນຖ່າຍວັດສະດຸຕໍ່ໄປນີ້: ຂໍ້ຕໍ່ເພົາຄວາມໄວຄົງທີ່, ຝາປິດບູດ, ຜ້າເບກ ແລະ ຊັບໃນ, ເຊັນເຊີ, ຄາດ ແລະ ແຜ່ນແຮງດັນ, ແມ່ປໍ້າ, ຊຸດສ້ອມ (ເບກ ແລະ ຄາດ), ນໍ້າມັນຂອງແຫຼວໃນລົດ, ສານເຮັດຄວາມເຢັນ, ໃສ້ກອງ, ປະເກັນ, ສາຍພານ, ແຫວນຮອງເບກ, ແຫວນຮອງກົມ, ຊີນນໍ້າມັນ, ພວກວັດສະດຸກັນຊຶມ, ຊິ້ນສ່ວນທີ່ເຮັດດ້ວຍຢາງ ແລະ ວັດສະດຸຫລຸ້ຍຫຽ້ນອື່ນໆ.

(6) ທ່ານ ແລະ ຜູ້ຂັບຂີ່ທີ່ໄດ້ຮັບອະນຸຍາດຈາກທ່ານ ໃນເວລາເກີດອຸປະຕິເຫດ ຫຼື ມີການສູນເສຍທີ່ກ່ຽວຂ້ອງກັບພາຫະນະຂອງທ່ານ ຕ້ອງໄດ້ລາຍງານອຸປະຕິເຫດ ຫຼື ການສູນເສຍດັ່ງກ່າວ ໄປຍັງສະຖານີຕຳຫຼວດທີ່ໃກ້ທີ່ສຸດ ຕາມຂໍ້ກຳນົດຂອງກົດໝາຍວ່າດ້ວຍການຈະລາຈອນທາງບົກ.

## 2. **ເງື່ອນໄຂຄ່າສະເລ່ຍ (ສຳລັບສັນຍາປະກັນໄພທີ່ຄຸ້ມກັນໂຕລົດເທົ່ານັ້ນ)**

ຖ້າມູນຄ່າຕະຫຼາດຂອງພາຫະນະຂອງທ່ານ ຫາກສູງກວ່າວົງເງິນຄຸ້ມກັນທີ່ລະບຸໄວ້ໃນສັນຍາປະກັນໄພຂອງທ່ານ ໃນເວລາເກີດອຸປະຕິເຫດ ຫຼື ມີການສູນເສຍ. ຄ່າສິນທົດແທນປະກັນໄພຂອງທ່ານຈະຫຼຸດລົງຕາມສັດສ່ວນທີ່ຍອມຮັບໄດ້. ຖ້າທ່ານມີພາຫະນະຫຼາຍກວ່າໜຶ່ງຄັນ ພາຫະນະແຕ່ລະຄັນຈະຢູ່ພາຍໃຕ້ເງື່ອນໄຂນີ້ແຍກກັນ. ມູນຄ່າຕະຫຼາດຂອງພາຫະນະ ໝາຍເຖິງມູນຄ່າຂອງພາຫະນະຕາມປະເພດຍີ່ຫໍ້ລົດ, ລຸ້ນ, ອາຍຸ ຫຼື ປີການຜະລິດ ແລະ ສະພາບໃກ້ຄຽງກັນ.



ບໍລິສັດ ອາລີອັນສ໌ ປະກັນໄພລາວ ຈຳກັດ
ເລກທີ 33, ຖະໜົນ ລ້ານຊ້າງ, ອາຄານ ອາລີອັນສ໌
ຕູ້ ປ. ນ. 4223 ນະຄອນຫຼວງວຽງຈັນ, ສປປລາວ
ໂທລະສັບ 1457; + 856 21 215903;
ແຈ້ງອຸປະຕິເຫດ 24 ຊົ່ວໂມງ ໂທ: 1456, 021 222 222, 020 5524 4222

Allianz Insurance Laos Co.,Ltd
33, Lanexang Avenue, Allianz Building
P. O. Box: 4223, Vientiane Capital, Lao PDR
Phone: 1457; +856 21 215903;
24 hrs./7 Accident Helpline: 1456, 021 222 222, 020 5524 4222

www.azlaos.com
www.facebook.com/allianzinsurancelaos
E-mail: agl@agl-allianz.com

3. **ຂໍ້ຄວນລະມັດລະວັງໃນການບຳລຸງຮັກສາ ແລະ ການຫຼຸດຜ່ອນການສູນເສຍ**

ທ່ານຕ້ອງໃຊ້ຄວາມລະມັດລະວັງໃນການບຳລຸງຮັກສາ ເພື່ອປ້ອງກັນລົດຂອງທ່ານບໍ່ໃຫ້ມີການສູນເສຍ ຫຼື ເສຍຫາຍທີ່ອາດເກີດຂຶ້ນ ແລະ ຮັກສາລົດຂອງທ່ານໃຫ້ຢູ່ໃນສະພາບດີພ້ອມໃຊ້ງານຕະຫຼອດເວລາ. ໃນກໍລະນີເກີດອຸປະຕິເຫດ ຫຼື ມີການສູນເສຍ ທ່ານຕ້ອງບໍ່ປ່ອຍປະລົດຂອງທ່ານໄວ້ໂດຍບໍ່ມີຄົນດູແລ ແລະ ຕ້ອງໃຊ້ຄວາມລະມັດລະວັງ ເພື່ອປ້ອງກັນການສູນເສຍ ຫຼື ຄວາມເສຍຫາຍເພີ່ມເຕີມ. ຖ້າລົດຂອງທ່ານມີການຂັບຂີ່ ກ່ອນການສ້ອມແປງທີ່ຈຳເປັນສຳເລັດ, ພວກເຮົາຈະບໍ່ຮັບຜິດຊອບຕໍ່ຄວາມສູນເສຍ ຫຼື ຄວາມເສຍຫາຍດັ່ງກ່າວທີ່ເກີດຂຶ້ນກັບລົດຂອງທ່ານ.

4. **ການປ່ຽນແປງ ຫຼື ແກ້ໄຂ**

ທ່ານຕ້ອງແຈ້ງໃຫ້ພວກເຮົາຊາບໂດຍທັນທີ ຖ້າມີການປ່ຽນແປງ, ການດັດແກ້ ຫຼື ເພີ່ມເຕີມອຸປະກອນເສີມໃດໜຶ່ງໃຫ້ກັບລົດຂອງທ່ານ ຊຶ່ງສິ່ງຜົນກະທົບຢ່າງຫຼວງຫຼາຍຕໍ່ກັບ ຄວາມຮັບຜິດຊອບຂອງພວກເຮົາໃນການຈ່າຍສິນທົດແທນປະກັນໄພ ແລະ ເມື່ອພິຈາລະນາແລ້ວ ພວກເຮົາມີສິດອອກຂໍ້ກຳນົດ, ເງື່ອນໄຂ ແລະ ກຳນົດຂໍ້ຍົກເວັ້ນເພີ່ມເຕີມໃດໆກໍ່ໄດ້ຕາມຄວາມເໝາະສົມ.

5. **ການສໍ້ໂກງເອົາຄ່າສິນທົດແທນປະກັນໄພ**

ທ່ານຈະຖືກເພີກຖອນສິດຜົນປະໂຫຍດທັງໝົດ ທີ່ກຳນົດໄວ້ໃນສັນຍາປະກັນໄພຂອງທ່ານ ຖ້າການຮຽກຮ້ອງສິນທົດແທນປະກັນໄພຂອງທ່ານ ເປັນການສໍ້ໂກງໃນແງ່ໃດກໍ່ຕາມ ຫຼື ຫາກທ່ານ ຫຼື ບຸກຄົນໃດກໍ່ຕາມໃນນາມຂອງທ່ານ ໃຊ້ວິທີການ, ກົນອຸບາຍ ຫຼື ເອກະສານເທັດ ເພື່ອຮັບຜົນປະໂຫຍດໃດໆ ພາຍໃຕ້ສັນຍາປະກັນໄພຂອງທ່ານ ຫຼື ຫາກທ່ານ ຫຼື ບຸກຄົນໃດກໍ່ຕາມໃນນາມຂອງທ່ານ ມີສ່ວນຮູ້ເຫັນກັບທ່ານ, ການກະທຳໂດຍຈົງໃຈທີ່ກໍ່ໃຫ້ເກີດຄວາມສູນເສຍ ຫຼື ຄວາມເສຍຫາຍໃດໆ ຫຼື ຫາກມີການແຈ້ງ ຫຼື ໃຫ້ຂໍ້ຄວາມອັນເປັນເທັດ ເພື່ອໃຫ້ໄດ້ມາກ່ຽວກັບສິນທົດແທນປະກັນໄພຂອງທ່ານ.

ຕາຕະລາງກ່ຽວກັບຄວາມຮັບຜິດຊອບມີສ່ວນຮ່ວມໃນເອກສານຊ້ອນທ້າຍລຸ່ມນີ້;

Allianz

1 ກຸມພາ 2023

## ເອກະສານຊ້ອນທ້າຍ

ຄ່າຫຼຸ້ຍຫ້ຽນນຳໃຊ້ກັບພາຫະນະທຸກປະເພດຍົກເວັ້ນ ລົດຈັກ ແລະ ລົດສາມລໍ້ ໃນກໍລະນີອາໄຫຼ່ທີ່ເສຍຫາຍຖືກປ່ຽນຖ່າຍດ້ວຍອາໄຫຼ່ໃໝ່.

| ອາຍຸການໃຊ້ງານຂອງລົດ | ຕົວລົດ, ກະຈົກລົດ ແລະ ອຸປະກອນຕິດຕັ້ງຈາກໂຮງງານ | | ຊິ້ນສ່ວນເຄື່ອງກົນຈັກ, ໄຟຟ້າ ແລະ ເອເລັກໂຕຣນິກ | |
|---|---|---|---|---|
| | ອາໄຫຼ່ຈາກສູນ/ຕົວແທນຈຳໜ່າຍ | ອາໄຫຼ່ຜະລິດຈາກໂຮງງານ OEM | ອາໄຫຼ່ຈາກສູນ/ຕົວແທນຈຳໜ່າຍ | ອາໄຫຼ່ຜະລິດຈາກໂຮງງານ OEM |
| ຕ່ຳກ່ວາ 1 ປີ | 0% | 0% | 0% | 0% |
| ຫຼາຍກວ່າ 1 ປີ | 5% | 0% | 10% | 0% |
| ຫຼາຍກວ່າ 2 ປີ | 10% | 0% | 20% | 0% |
| ຫຼາຍກວ່າ 3 ປີ | 15% | 0% | 30% | 0% |
| ຫຼາຍກວ່າ 4 ປີ | 20% | 0% | 40% | 10% |
| ຫຼາຍກວ່າ 5 ປີ | 25% | 10% | 50% | 15% |
| ຫຼາຍກວ່າ 6 ປີ | 30% | 15% | 60% | 20% |
| ຫຼາຍກວ່າ 7 ປີ | 40% | 20% | 70% | 25% |
| ຫຼາຍກວ່າ 8 ປີ | 50% | 25% | 80% | 30% |
| ຫຼາຍກວ່າ 9 ປີ | 60% | 30% | 80% | 40% |
| ຫຼາຍກວ່າ 10 ປີ | 70% | 35% | 80% | 50% |

*OEM – ອາໄຫຼ່ຜະລິດຈາກໂຮງງານ

ຄ່າຫຼຸ້ຍຫ້ຽນນຳໃຊ້ກັບລົດຈັກ ແລະ ລົດສາມລໍ້ ໃນກໍລະນີອາໄຫຼ່ທີ່ເສຍຫາຍຖືກປ່ຽນຖ່າຍດ້ວຍອາໄຫຼ່ໃໝ່.

| ອາຍຸການໃຊ້ງານຂອງລົດ | ຕົວລົດ, ກະຈົກລົດ ແລະ ອຸປະກອນຕິດຕັ້ງຈາກໂຮງງານ | ຊິ້ນສ່ວນເຄື່ອງກົນຈັກ, ໄຟຟ້າ ແລະ ເອເລັກໂຕຣນິກ |
|---|---|---|
| ຕ່ຳກ່ວາ 1 ປີ | 0% | 0% |
| ຫຼາຍກວ່າ 1 ປີ | 10% | 15% |
| ຫຼາຍກວ່າ 2 ປີ | 15% | 20% |
| ຫຼາຍກວ່າ 3 ປີ | 20% | 30% |
| ຫຼາຍກວ່າ 4 ປີ | 25% | 40% |
| ຫຼາຍກວ່າ 5 ປີ | 30% | 50% |



ບໍລິສັດ ອາລີອັນສ໌ ປະກັນໄພລາວ ຈຳກັດ
ເລກທີ 33, ຖະໜົນ ລ້ານຊ້າງ, ອາຄານ ອາລີອັນສ໌
ຕູ້ ປ. ນ. 4223 ນະຄອນຫຼວງວຽງຈັນ, ສປປລາວ
ໂທລະສັບ 1457; + 856 21 215903;
ແຈ້ງອຸປະຕິເຫດ 24 ຊົ່ວໂມງ ໂທ: 1456, 021 222 222, 020 5524 4222

Allianz Insurance Laos Co.,Ltd
33, Lanexang Avenue, Allianz Building
P. O. Box: 4223, Vientiane Capital, Lao PDR
Phone: 1457; +856 21 215903;
24 hrs./7 Accident Helpline: 1456, 021 222 222, 020 5524 4222

www.azlaos.com
www.facebook.com/allianzinsurancelaos
E-mail: agl@agl-allianz.com

| | | |
|---|---|---|
| ຫຼາຍກວ່າ 6 ປີ | 35% | 60% |
| ຫຼາຍກວ່າ 7 ປີ | 40% | 70% |
| ຫຼາຍກວ່າ 8 ປີ | 50% | 80% |
| ຫຼາຍກວ່າ 9 ປີ | 60% | 80% |
| ຫຼາຍກວ່າ 10 ປີ | 75% | 80% |

**ຄ່າຫຼູ້ຍຫ້ຽນສຳລັບອາໄຫຼ່ເສື່ອມສະພາບຕາມການໃຊ້ງານ:** 50% ໂດຍບໍ່ຄຳນຶງເຖິງປີການຜະລິດ

**ອາໄຫຼ່ເສື່ອມສະພາບຕາມການໃຊ້ງານ:** ຕໍ່ເພີາຄວາມໃວຄົງທີ່, ຝາປິດບູດ, ຜ້າເບກ ແລະ ຊັບໃບ, ເຊັນເຊີ, ຄາດ ແລະ ແຜ່ນແຮງດັນ, ແມ່ປ້ຳ, ຊຸດສ້ອມ (ເບກ ແລະ ຄາດ), ນ້ຳມັນຂອງແຫຼວໃນລົດ, ສານເຮັດຄວາມເຢັນ, ໃສ້ກອງ, ປະເກັນ, ສາຍພານ, ແຫວນຮອງເບກ, ແຫວນຮອງກົນ, ຊີນນ້ຳມັນ, ພວກວັດສະດຸກັນຊືມ, ຊີ້ນສ່ວນທີ່ເຮັດດ້ວຍຢາງ ແລະ ວັດສະດຸຫລຸ້ຍຫ້ຽນອື່ນໆ.

ກະຊວງ ການ ເງິນ
ບໍລິສັດ ອາລີອັນຊ໌ ປະກັນໄພລາວ ຈຳກັດ
Allianz Insurance Laos Co.,LTD
ນະຄອນ ຫຼວງ ວຽງຈັນ

Guy APOVY
CEO